# ຄວາມເປັນສ່ວນຕົວ ໃນອອນລາຍ ມີຄວາມສຳຄັນ

ປົກປ້ອງຂໍ້ມູນຂອງເຈົ້າ



# ຄວາມເປັນສ່ວນຕົວໃນອອນລາຍແມ່ນຫຍັງ?

ການຄວບຄຸມຂໍ້ມູນຂອງຕົນເອງໃນຂະນະທີ່ໃຊ້ອິນເຕີເນັດ.

ຈະມີຄວາມສ່ຽງຫຍັງແດ່ ?

ຖ້າເຈົ້າບໍ່ມີຄວາມເປັນສ່ວນຕົວໃນອອນລາຍ?




**ໄພຄຸກຄາມຕໍ່ຄວາມປອດໄພສ່ວນບຸກຄົນ:** ຂໍ້ມູນສ່ວນຕົວທີ່ເປີດເຜີຍໃນອິນເຕີເນັດສາມາດຖືກນຳໃຊ້ໂດຍຜູ້ທີ່ສະແດງພຶດຕິກຳຕິດຕາມ stalkers ຫຼື ບຸກຄົນອື່ນ ເພື່ອລັກເອົາຂໍ້ມູນສ່ວນຕົວຂອງເຈົ້າ ແລະ ແມ່ນແຕ່ອາດວາງແຜນກໍ່ອະຊະຍາກຳໃນໂລກແຫ່ງຄວາມເປັນຈິງ.

**ການໂຈມຕີທາງອອນລາຍ:** ຄວາມພະຍາຍາມເຂົ້າເຖິງບັນຊີທະນາຄານ, ອີເມວ ແລະ ບັນຊີຢູ່ສື່ສັງຄົມອອນລາຍຂອງເຈົ້າ.

**ອິດທິພົນ ແລະ ການຈັດການ:** ຂໍ້ມູນສ່ວນຕົວຖືກນຳໃຊ້ໂດຍບໍລິສັດສື່ສັງຄົມອອນລາຍ ເພື່ອນຳສະເໜີເນື້ອໃນທີ່ພະຍາຍາມປ່ຽນແປງຄວາມເຊື່ອ, ຄວາມຄິດເຫັນ ແລະ ພຶດຕິກຳຂອງຄົນ, ແລະ ກະຕຸ້ນໃຫ້ພວກເຂົາຈັບຈ່າຍຊື້ສິນຄ້າ.

# ເຈົ້າຈະປົກປ້ອງຄວາມເປັນສ່ວນຕົວໃນອອນລາຍແນວໃດ?

ປະຕິບັດຕາມເຄັດລັບໃນໜ້າຖັດໄປນີ້....

# ໃຊ້ລະຫັດຜ່ານທີ່ແຂງແຮງ

*ລະຫັດຜ່ານຂອງແຕ່ລະບັນຊີຄວນແຕກຕ່າງກັນ*





## ລະຫັດທີ່ບໍ່ປອດໄພ

- ຊື່ຂອງເຈົ້າ, ວັນເກີດ, ເບີໂທລະສັບ ຫຼື ຊື່ຂອງສັດລ້ຽງ
- ເລກທີ່ເປັນລຳດັບທົ່ວໄປເປັນຕົ້ນ 123456,
- abcdef, qwerty, abc123, etc.



## ລະຫັດທີ່ປອດໄພ

- 8-12 ຕົວອັກສອນ
- ລວມຕົວອັກສອນໃຫຍ່ ແລະ ຕົວອັກສອນນ້ອຍ, ຕົວເລກ ແລະ ສັນຍາລັກພິເສດ (# $ % & !)
- Th1si5sTr0ng3Er!

SLIDE



## ອັບເດດໂປຣແກຣມຢູ່ສະເໝີ

ຕິດຕັ້ງອັບເດດໃໝ່ເມື່ອມັນຖືກເປີດຕົວເຜີຍແຜ່




## ກວດສອບການຕັ້ງຄ່າຄວາມເປັນສ່ວນຕົວຂອງແອັບ

ຈຳກັດຂໍ້ມູນສ່ວນໂຕທີ່ແບ່ງປັນ, ກຳນົດວ່າໃຜສາມາດເຂົ້າເບິ່ງຂໍ້ມູນສ່ວນຕົວຂອງເຈົ້າໄດ້ ແລະ ປິດສິດທີ່ຈຳເປັນ, ໃຊ້ການກວດສອບຄວາມເປັນສ່ວນໂຕ ຫຼື Facebook’s Privacy Checkup

# ລະມັດລະວັງໃນສິ່ງທີ່ເຈົ້າແບ່ງປັນ!

***ກ່ອນທີ່ຈະສົ່ງ, ຖາມຕົນເອງດັ່ງນີ້:***




- ຂ້ອຍຈະຮູ້ແນວໃດວ່າ ໝູ່ເພື່ອນທັງໝົດໃນເຟສບຸກ ແລະ ຜູ້ຕິດຕາມ ຈະເຫັນເລື່ອງທັງໝົດ ເປັນການສ່ວນໂຕ ຫຼື ຄົນແປກໜ້າ ຈະເຫັນສິ່ງຕໍ່ໄປນີ້ທັງໝົດ ?
- ຂ້ອຍບໍ່ມີບັນຫາໃດ ຖ້າພໍ່-ແມ່ ມາເຫັນສິ່ງເຫຼົ່ານີ້ ?
- ຂ້ອຍຈະຄິດແນວໃດ ຖ້າຫົວໜ້າ ຫຼື ຄູຂອງຂ້ອຍມາເຫັນສິ່ງນີ້ ?
- ໃນອີກ 5- 10 ປີຂ້າງໜ້າ ຂ້ອຍຈະຄິດແນວໃດກັບພາບທີ່ສົ່ງນີ້ ? (ມັນອາດຈະເດັ້ງຂຶ້ນມາອີກ)